ແຜນການສອນ

ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 5 ສິງຫາ- 2007 ( 08-05-2007

---

## <u>ໃນເມື່ອມີຄວາມຮັບຜິດຊອບຢ່າງຫລວງຫລາຍ:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** 1 ກະສັດ 3:1-15

**<u>ຄຳຖາມແຫ່ງຊີວິດ:</u>** ຂ້າພະເຈົ້າຈະຈັດການກັບຄວາມຮັບຜິດຊອບນີ້ດ້ວຍວິທີໃດ?

**<u>ຄວາມຈິງໃນພຣະຄັມພີ:</u>** ພຣະເຈົ້າມີຄວາມພໍພຣະທັຍກັບໄພ່ພົນຂອງພຣະອົງທີ່ຈະປະທານປັນຍາໃຫ້ພວກເຂົາໃນເມື່ອມີຄວາມປະສົງທີ່ຈະຮັບຜິດຊອບກັບພາຣະກິດທີ່ພຣະອົງມອບໃຫ້.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ແຕ່ງຂື້ນມາເພື່ອຊ່ອຍທ່ານໃຫ້ຊອກຫາຄວາມຊ່ອຍເຫລືອຈາກພຣະເຈົ້າໃນເມື່ອປະເຊີນກັບການຮັບຜິດຊອບຢ່າງຫລວງຫລາຍໂດຍ:

- ໃຫ້ເຂົ້າໃຈວ່າພຣະເຈົ້າປະທານສະຕິປັນຍາໃຫ້ທ່ານເພື່ອຈະເຮັດພຣະປະສົງຂອງພຣະອົງໃຫ້ສຳເຣັດ ແລະ
- ຊອກສແວງຫາພຣະປັນຍາເພື່ອຈັດການກັບພາຣະກິດຕ່າງ ໆ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**<u>ແຜນການສອນ</u>**", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ.

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ.
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ທີ່ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ.
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຽັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ.
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ.
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ.

## ບົດນຳ:

1. ໃນເມື່ອຊີວິດຫາກຕົກຕ່ຳລົງທ່ານຈະຕ້ອງຫລຽວຂື້ນເທິງຫາພຣະເຈົ້າຜູ້ທີ່ຊ່ອຍໄດ້.
2. ພວກເຮົາຈະຕ້ອງຊ່ອຍເປັນກຳລັງໃຈໃຫ້ແກ່ຜູ້ທີ່ມີຄວາມຮັບຜິດຊອບຢ່າງຫລວງຫລາຍນັ້ນ,

ຄຳຖາມ: 1. ໃນຊີວິດຂອງທ່ານ ທ່ານຈື່ໄດ້ບໍ່ວ່າທ່ານເຄີຍໄດ້ເຮັດໃຫ້ຄວາມຮັບຜິດຊອບຢ່າງຫລວງຫລາຍຂອງທ່ານສຳເຣັດໄດ້ຢ່າງໃດ?

2. ທ່ານໄດ້ຜ່ານຜ່າຄວາມຫຍຸ້ງຍາກສັບສົນອັນນັ້ນມາໄດ້ຢ່າງໃດ?

**1. ຫັນເຂົ້າຫາພຣະເຈົ້າ:** (1 ກະສັດ 3:1-4)

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ 1 ກະສັດ 3:1-4

**2) ອະທິບາຍ:** ອັນທີນຶ່ງທີ່ຈະຕ້ອງຈັດການກັບຄວາມຮັບຜິດຊອບຢ່າງຫລວງຫລາຍນັ້ນກໍຄື: ພວກເຮົາຕ້ອງຫັນໜ້າເຂົ້າຫາພຣະເຈົ້າ.

**3) ຄໍາຖາມ:** ກະສັດຊາໂລໂມນເຂົ້າຫາພຣະເຈົ້າໄດ້ຊ່ວຍເພິ່ນຢ່າງໃດແດ່?

- ໃຫ້ພິຈາຣະນາເບິ່ງບັນຫາຄວາມຮັບຜິດຊອບທີ່ຫລາຍເກີນໄປນັ້ນ ແລ້ວເອົາມາທູນຂໍໃຫ້ພຣະອົງຊ່ວຍ ແລະພ້ອມທັງນະມັສການພຣະອົງ ແລ້ວພຣະອົງຈະຊົງຊ່ອຍທ່ານ.
- ອ່ານພຣະທັມ 1 ກະສັດ 3:4 ແລ້ວຄົ້ນຄ້ວາ, ອະທິບາຍໃຫ້ເຂົ້າໃຈ, ໃຫ້ໄດ້ຄວາມໝາຍ.

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** 1 ກະສັດ 3:1-4

1. ທ່ານໃຫ້ຄວາມໝັ້ນໃຈໃນການໄວ້ວາງໃຈໃນພຣະເຈົ້າຂອງທ່ານຢ່າງໃດ?
2. ໃຜເປັນຜູ້ໃຫ້ທ່ານມີພຣະເຈົ້າຢູ່ໃນຊີວິດຂອງທ່ານ, ສນັບສນູນທ່ານໃຫ້ໄວ້ວາງໃຈໃນພຣະອົງ?
3. ສິ່ງທີ່ທ່ານໄດ້ຮັບຈາກພຣະເຈົ້າໃນການໄວ້ວາງໃຈໃນພຣະອົງນັ້ນມີຫຍັງແດ່?
4. ທ່ານຈະໃຫ້ຄວາມໄວ້ວາງໃຈໃນພຣະເຈົ້າຂອງທ່ານໝັ້ນຄົງຢູ່ໃນທ່ານໄດ້ຢ່າງໃດ?
5. ທ່ານມັກການດໍາເນີນຊີວິດຢູ່ແບບນີ້ບໍ່? (ໂດຍເພິ່ງ ແລະໄວ້ວາງໃຈໃນພຣະເຈົ້າ)

**2. ຈົດຈໍ່ຕໍ່ສິ່ງສໍາຄັນ: 1 ກະສັດ 3:5-9**

1) ຂໍໃຫ້ນັກຮຽນອາສາສມັກອ່ານພຣະທັມ 1 ກະສັດ 3:5-9

**2) ແນະນໍາ:** ຂຽນຄໍາວ່າ: "**ພຣະເຈົ້າເວົ້າວ່າຢ່າງໃດ?**" (ຂໍ້ 5)

- ຫລັງຈາກໃຫ້ນັກຮຽນຄົ້ນຄວ້າໄດ້ຄໍາຕອບແລ້ວ, ໃຫ້ຖາມນັກຮຽນເຖິງຄໍາຕອບທີ່ເຂົາເຈົ້າໄດ້ມານັ້ນມີແນວໃດແດ່ ແລະຂຽນຄໍາຕອບເຫລົ່ານັ້ນໃສ່ກະດານ ແລະຄໍາຕອບອັນທີ່ຖືກຕ້ອງຕາມພຣະຄັມພີ, ແລ້ວກໍໜູນໃຈໃຫ້ນັກຮຽນເອົາໄປໃຊ້.

**3) ຄໍາຖາມ:** (1). ພຣະເຈົ້າໄດ້ເວົ້າຫຍັງກັບຊາໂລໂມນ? (ຜ່ານທາງຄວາມຝັນ)

(2). ຊາໂລໂມນໄດ້ຕອບສນອງຕໍ່ສິ່ງທີ່ພຣະເຈົ້າບອກນັ້ນຢ່າງໃດ?

(ຊາໂລໂມນໄດ້ທູນຂໍພຣະເຈົ້າດ້ວຍຄວາມໄວ້ວາງໃຈ)

(4). ຖ້າແມ່ນທ່ານ ທ່ານຈະຈັດຄວາມໄວ້ວາງໃຈນັ້ນໄວ້ໃນຫົວໃຈຂອງທ່ານໃນຣະດັບໃດ?

(5). ທ່ານຈະຕອບສນອງຕໍ່ສິ່ງສໍາຄັນທີ່ພຣະເຈົ້າບອກນັ້ນດ້ວຍວິທີໃດ?

(6). ການທູນຂໍຂອງທ່ານໄດ້ໃຫ້ກຽດພຣະເຈົ້າບໍ່?

**4) ຂໍ້ສັງເກດ:** ການສັຣເສີນຍ້ອງຍໍພຣະເຈົ້າເປັນສິ່ງສໍາຄັນໃຫ້ແດ່ພຣະອົງຕ່າງຫາກ ຊຶ່ງບໍ່ແມ່ນເພື່ອພວກເຮົາ.

- ພວກເຮົາຄວນຈົດຈໍ່ຢູ່ໃນຣາຊອານາຈັກຂອງພຣະອົງຫລາຍກວ່າຈົດຈໍ່ຢູ່ສິ່ງທີ່ພວກເຮົາຕ້ອງການ ຫລື ແຜນການຂອງພວກເຮົາເອງ.

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** 1 ກະສັດ 3:5-9

1. ພຣະເຈົ້າໄດ້ຊົງຮຽກເອີ້ນທ່ານໃຫ້ເຮັດສິ່ງທີ່ສໍາຄັນດ້ວຍການໄວ້ວາງໃຈໃນພຣະອົງຫລືບໍ່?
2. ຖ້າເປັນດັ່ງນັ້ນແລ້ວ ທ່ານໄດ້ຕອບສນອງຫລືບໍ່?
3. ຖ້າທ່ານໄດ້ຕອບສນອງ, ທ່ານໄດ້ຕອບສນອງດ້ວຍການຖວາຍກຽດພຣະອົງບໍ່?

4. ຖ້າທ່ານເຮັດຢ່າງຖວາຍກຽດພຣະເຈົ້າແລ້ວຜົນໄດ້ຮັບນັ້ນແມ່ນຫຍັງ?

**3. <u>ຍ່າງໄປຕາມທາງຂອງພຣະເຈົ້າ:</u>** 1 ກະສັດ 3:10-15

1) ຂໍໃຫ້ນັກຮຽນອາສາສມັກອ່ານ 1 ກະສັດ 3:10-15

2) **ຄຳຖາມ:** ພຣະເຈົ້າໄດ້ຊົງພໍພຣະທັຍໃນການທຳຕາມຂອງຊາໂລໂມນແນວໃດ? ( ເປັນການຖວາຍພຣະກຽດພຣະເຈົ້າ).

3) **ຄຳຖາມ:** (1). ເມື່ອພຣະເຈົ້າໃຫ້ພາຣະໜ້າທີ່ແກ່ພວກເຮົາແລ້ວ, ພວກເຮົາຄວນຕອບສນອງພຣະອົງຢ່າງໃດເພື່ອເປັນການສັຣເສີນ ແລະຖວາຍກຽດແດ່ພຣະອົງ? ( ດ້ວຍການເຊື່ອຟັງ )

(2). ພຣະເຈົ້າໃຫ້ຊາໂລໂມນແຕ່ສິ່ງທີ່ຊາໂລໂມນທູນຂໍເທົ່ານັ້ນບໍ?

(3). ມີສິ່ງໃດອີກແດ່ທີ່ພຣະເຈົ້າປະທານໃຫ້ແກ່ຊາໂລໂມນ? ( ຮັ່ງມີ, ກຽດຕິຍົດ ແລະອາຍຸຍືນຍາວ)

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** 1 ກະສັດ 3:10-15

1. ຖ້າຫາກພຣະເຈົ້າໃຫ້ບາງສິ່ງບາງຢ່າງແກ່ທ່ານ ທ່ານຈະຮັບຜິດຊອບບໍ່?
2. ທ່ານຄິດວ່າກິຈການຂອງທ່ານແຕ່ລະມື້ໄດ້ເຮັດໃຫ້ພຣະເຈົ້າພໍພຣະທັຍຢູ່ບໍ່?
3. ກິຈການທີ່ທ່ານທຳດ້ວຍການເຊື່ອຟັງພຣະເຈົ້າໄດ້ຊ່ວຍໄດ້ຊ່ອຍຜ່ອນຄາຍພາຣະອັນໜັກໜ່ວງຂອງທ່ານບໍ່?

## <u>ບົດຮຽນພຣະຄັມພີແຫ່ງຄວາມຈິງ:</u>

- ໃນເມື່ອພວກເຮົາປະເຊີນກັບພາຣະໜ້າທີ່ຫລາຍຈົນເກີນໄປ, ອັນທີ່ແຮກເຮົາຕ້ອງເຂົ້າຫາພຣະຜູ້ເປັນເຈົ້າ.
- ການອ້ອນວອນທູນຂໍບໍ່ຕ້ອງໃຫ້ເປັນຂອງຕົນເອງ, ແຕ່ຕ້ອງຈົດຈໍ່ໃສ່ໃນສິ່ງສຳຄັນຂອງພຣະເຈົ້າ- ແລະໃນພຣະປະສົງຂອງພຣະອົງພຣະຜູ້ເປັນເຈົ້າ.
- ໃນເມື່ອບັນດາຜູ້ທີ່ເຊື່ອທັງຫລາຍຍ່າງຕາມທາງຂອງພຣະເຈົ້າ ພຣະອົງກໍຈະປະທານໃນສິ່ງທີ່ຈຳເປັນໃຫ້ແກ່ເຂົາ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ. www.lsbf.org. by JH